**ອົງການສະຫະປະຊາຊາດ ເພື່ອການພັດທະນາ**

# ບົດຂ່າວ

Empowered lives. Resilient nations.

## ວິທີການໃໝ່ ເພື່ອປັບປຸງການດຳລົງຊີວິດຂອງປະຊາຊົນໃນທ້ອງຖິ່ນ ໂດຍຜ່ານທຳມະຊາດທີ່ສວຍງາມຂອງ ສປປ ລາວ

*ກົມຄຸ້ມຄອງຊັບພະຍາກອນປ່າໄມ້ ຂອງກະຊວງກະສິກຳ ແລະ ປ່າໄມ້ ເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການໃໝ່ ໃນເຂດປ່າໂຄກ ຂອງ ສປປ ລາວ ເພື່ອສົ່ງເສີມການອະນຸລັກປ່າໂຄກ ເພື່ອນຳເອົາຜົນປະໂຫຍດມາສູ່ຊຸມຊົນໃນທ້ອງຖິ່ນ.*

ການຈັດຕັ້ງປະຕິບັດໂຄງການໃໝ່ໄດ້ເລີ່ມຂຶ້ນໃນແຂວງສະຫວັນນະເຂດ ເຊິ່ງໄດ້ຮັບທຶນສະໜັບສະໜຸນຈາກກອງທຶນສິ່ງແວດລ້ອມໂລກ ແລະ ຈັດຕັ້ງປະຕິບັດໂດຍອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ກົມຄຸ້ມຄອງຊັບພະຍາກອນປ່າໄມ້ ຂອງກະຊວງກະສິກຳ ແລະ ປ່າໄມ້. ລະບົບນິເວດປ່າໂຄກທີ່ຢູ່ໃນເຂດນີ້ ແມ່ນຖືວ່າມີຄວາມສຳຄັນໃນລະດັບຊາດ ແລະ ໃນລະດັບສາກົນ. ໂຄງການດັ່ງກ່າວເຊິ່ງຄາດວ່າ ຈະໄດ້ຮັບການຈັດຕັ້ງປະຕິບັດຈົນຮອດເດືອນພຶດສະພາ 2022 ຈະປະຕິບັດການຄຸ້ມຄອງປ່າໄມ້ ແລະ ດິນແບບຍືນຍົງ ຢູ່ແຂວງສະຫວັນນະເຂດ ເພື່ອແນໃສ່ ຮັບປະກັນທີ່ຢູ່ອາໄສຂອງສັດປ່າ, ອະນຸລັກຊີວະນາໆພັນ ແລະ ປົກປັກຮັກສາລະບົບນິເວດທີ່ຫຼາກຫຼາຍເຫຼົ່ານີ້ ເພື່ອນຳເອົາຜົນປະໂຫຍດມາສູ່ປະຊາຊົນລາວ.

ປ່າໂຄກແມ່ນປ່າໄມ້ຊະນິດໜຶ່ງທີ່ມີຫຼາຍໃນອາຊີຕາເວັນອອກສຽງໃຕ້ ແລະ ອຸດົມສົມບູນໄປດ້ວຍນ້ຳມັນຍາງ ແລະ ເຄື່ອງປ່າຂອງດົງທີ່ມີລາຄາ. ເຖິງຢ່າງໃດກໍຕາມ, ພື້ນທີ່ປ່າໂຄກເຫຼົ່ານີ້ ຍັງໄດ້ຮັບຜົນກະທົບຈາກການຫັນເປັນດິນກະສິກຳ ເພື່ອປູກພືດເສດຖະກິດ ແລະ ກິດຈະກຳອື່ນໆເຊັ່ນ: ການຕັດໄມ້, ການລ່າສັດ ແລະ ການເກັບເຄື່ອງປ່າຂອງດົງ. ມາຮອດປະຈຸບັນ, ແຂວງສະຫວັນນະເຂດ ກໍໄດ້ມີຄວາມພະຍາຍາມຄຸ້ມຄອງຮັກສາພື້ນທີ່ປ່າໄມ້ຊະນິດນີ້ໄວ້. ນີ້ເປັນວຽກງານທີ່ມີຄວາມສຳຄັນ ເພາະວ່າເປັນບຸລິມະສິດໃນລະດັບສາກົນໃນການອະນຸລັກຊີວະນາໆພັນ, ປ່າໂຄກໃນເຂດລຸ່ມແມ່ນ້ຳຂອງ ປະກອບມີສັດປ່າທີ່ຫາຍາກ ແລະ ຕົ້ນໄມ້ນາໆພັນ ເຊິ່ງເປັນຕົວແທນຂອງລະບົບນິເວດປະເພດນີ້. ນອກຈາກນັ້ນ, ການບັນລຸເປົ້າໝາຍຂອງໂຄງການໃນການອະນຸລັກປ່າໂຄກ ແລະ ການປັບປຸງການດຳລົງຊີວິດຂອງປະຊາຊົນໃນທ້ອງຖິ່ນ ຈະສົ່ງສັນຍານທີ່ດີໃນການອະນຸລັກປ່າໂຄກໃນໂຄງການຕໍ່ໄປ.

ປ່າໂຄກບໍ່ພຽງແຕ່ເປັນທີ່ຢູ່ອາໄສຂອງສັດປ່ານາໆຊະນິດ ແລະ ສັດທີ່ກຳລັງໃກ້ຈະສູນພັນເທົ່ານັ້ນ, ປ່າໄມ້ປະເພດນີ້ຍັງຄວບຄຸມການສະໜອງນ້ຳໃຕ້ດິນ ໃຫ້ການດູດຊຶມນ້ຳຝົນໄວ້ໃນຮາກໄມ້ ແລະ ໃບໄມ້, ຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ເກັບຮັກສາອາຍກາກໂບນິກ ພ້ອມທັງຮັກສາດິນເນີນພູບໍ່ໃຫ້ເສາະເຈື່ອນໄດ້ງ່າຍ. ນອກຈາກນີ້, ຍັງມີຄວາມສຳຄັນຕໍ່ກັບຊຸມຊົນທ້ອງຖິ່ນ ເນື່ອງຈາກວ່າເປັນແຫຼ່ງອາຫານທີ່ຫຼາກຫຼາຍ ທີ່ເປັນເຄື່ອງປ່າຂອງດົງ ເຊັ່ນ ໝາກໄມ້, ເຫັດ ແລະ ແມງໄມ້.

ໃນກອງປະຊຸມຄັ້ງທຳອິດຂອງໂຄງການທີ່ໄດ້ຈັດຂຶ້ນໃນວັນທີ 20 ຕຸລາ, ທ່ານນາງ ຄາຣິນາ ອິມໂມເນັນ, ຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ໄດ້ກ່າວເຖິງຄວາມສຳຄັນຂອງຊັບພະຍາກອນປ່າໄມ້ທີ່ມີຕໍ່ກັບຊຸມຊົນໃນທ້ອງຖິ່ນ ແລະ ການມີສ່ວນຂອງຊຸມຊົນວ່າ: ”ຊຸມຊົນຈະມີໂອກາດໃນການມີສ່ວນຮ່ວມກັບໂຄງການຢ່າງເຕັມສ່ວນ ເພື່ອຊອກຫາໂອກາດໃນການຜະລິດກະສິກຳແບບຍືນຍົງ, ການເກັບເຄື່ອງປ່າຂອງດົງ ແລະ ການພັດທະນາການທ່ອງທ່ຽວທາງລະບົບນິເວດ ເພື່ອແນໃສ່ປັບປຸງການດຳລົງຊີວິດຂອງເຂົາເຈົ້າ,”.

ກອງທຶນສິ່ງແວດລ້ອມໂລກ ເປັນຜູ້ໃຫ້ທຶນຫຼັກສຳລັບໂຄງການນີ້ ເຊິ່ງສະໜອງທຶນຈຳນວນຫຼາຍກວ່າ 10 ລ້ານໂດລາ ສົມທົບກັບທຶນສະໜັບສະໜຸນຈາກທະນາຄານພັດທະນາອາຊີ, ກອງທຶນອະນຸລັກສັດປ່າໂລກ ປະຈຳ ສປປ ລາວ ແລະ ໂຄງການເຊື່ອມໂຍງສິ່ງແວດລ້ອມໃນກິດຈະກຳແກ້ໄຂຄວາມທຸກຍາກຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ອົງການສະຫະປະຊາຊາດ ເພື່ອສິ່ງແວດລ້ອມ, ເຊິ່ງຈັດຕັ້ງປະຕິບັດຢູ່ 5 ເມືອງເປົ້າໝາຍໃນແຂວງສະຫວັນນະເຂດ.

ໂດຍຄວາມພະຍາຍາມຮ່ວມກັນລະຫວ່າງພາຍໃນ ແລະ ຕ່າງປະເທດ, ໂຄງການນີ້ແມ່ນສອດຄ່ອງກັບເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 ແລະ ເປົ້າໝາຍການພັດທະນາແບບຍືນຍົງຫຼາຍໆເປົ້າໝາຍ. ເປົ້າໝາຍການພັດທະນາແບບຍືນຍົງ ແມ່ນວິໄສທັດໃນລະດັບສາກົນ ເພື່ອໃຫ້ມະນຸດ ແລະໂລກກ້າວສູ່ເສັ້ນທາງແບບຍືນຍົງ ພາຍໃນປີ 2030. ເປົ້າໝາຍດັ່ງກ່າວເປັນພື້ນຖານໃຫ້ແກ່ວາລະການພັດທະນາໃໝ່ ເຊິ່ງຕ້ອງໄດ້ພະຍາຍາມຮ່ວມກັນ ເພື່ອລຶບລ້າງຄວາມທຸກຍາກ, ປ່ຽນແປງຊີວິດການເປັນຢູ່ ແລະ ປົກປ້ອງໂລກ. ເປົ້າໝາຍການພັດທະນາແບບຍືນຍົງ ທີ່ໂຄງການນີ້ຕ້ອງການແກ້ໄຂ ເພື່ອການອະນຸລັກລະບົບນິເວດທີ່ມີຄວາມສຳຄັນຂອງ ສປປ ລາວ ປະກອບມີ ເປົ້າໝາຍທີ 2 ກ່ຽວກັບຄວາມໝັ້ນຄົງດ້ານສະບຽງອາຫານ; ເປົ້າໝາຍທີ 5 ກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກຍິງ; ເປົ້າໝາຍທີ 13 ກ່ຽວກັບມາດຕະການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ; ເປົ້າໝາຍທີ 15 ກ່ຽວກັບການອະນຸລັກຊີວະນາໆພັນ ແລະ ລະບົບນິເວດ; ແລະ ເປົ້າໝາຍທີ 17 ກ່ຽວກັບການເປັນຄູ່ຮ່ວມມືທີ່ມີປະສິດທິຜົນ. ໂດຍສະເພາະ ເປົ້າໝາຍກ່ຽວກັບການເປັນຄູ່ຮ່ວມມືນີ້ ຈະມີບົດບາດສຳຄັນສຳລັບການປົກປັກຮັກສາຄວາມງາມຂອງໂລກ, ໂດຍບໍ່ມີການຈຳກັດຊຸມຊົນທີ່ດຳລົງຊີວິດໃນລະບົບນິເວດເຫຼົ່ານັ້ນອອກຈາກການພັດທະນາ, ແຕ່

ເຊື່ອມເຂົາເຈົ້າ, ຄວາມຮູ້ ແລະ ຄວາມສາມາດຂອງເຂົາເຈົ້າ ເຂົ້າໃນຄວາມພະຍາຍາມອະນຸລັກສິ່ງແວດລ້ອມຮ່ວມກັນ.

**ຂໍ້ມູນຕິດຕໍ່**

ທ່ານນາງ ດຣ. ມາກາເຣັດ ໂຈນສ ວິນລ່ຽມສ, ຫົວໜ້າໜ່ວຍງານສິ່ງແວດລ້ອມຂອງອົງການສະຫະປະຊາຊາດປະຈຳ ສປປ ລາວ

margaret.jones.williams@undp.org

+856 2055515876